ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 0988 /ທຄຕລ..2025........
ນະຄອນຫຼວງວຽງຈັນ, ວັນທີ:....31 MAR 2025.......

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍ ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາບຳລຸງຮັກສາ ຈັກປັ່ນໄຟຟ້າສຳຮອງ ແລະ ໝໍ້ແປງໄຟ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍ, ເພື່ອເຂົ້າຮ່ວມປະມູນລາຄາໃນການບໍລິການ ບຳລຸງຮັກສາ ຈັກປັ່ນໄຟຟ້າສຳຮອງ (Generator) ແລະ ໝໍ້ແປງໄຟ ຂອງ ທຄຕລ ເພື່ອຮັບປະກັນການໃຊ້ງານອຸປະກອນໄຟຟ້າສຳຮອງ. ດັ່ງນັ້ນ, ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລຳດັບ | ລາຍການ | ຈຳນວນ (ໜ່ວຍ) | ສະຖານທີ່ |
|---|---|---|---|
| 1 | ຈັກປັ່ນໄຟ Cummins Generator 500kVA | 1 | ສຳນັກງານໃຫຍ່ |
| 2 | ຈັກປັ່ນໄຟ Cummins Generator 500kVA | 1 | |
| 3 | ຈັກປັ່ນໄຟ Cummins Generator 500kVA | 1 | |
| 4 | ໝໍ້ແປງ 1250 kVA | 1 | |
| 5 | ໝໍ້ແປງ 1250 kVA | 1 | |
| 6 | ຕູ້ຄວບຄຸມ (ATS) | 5 | |

**ໝາຍເຫດ:** ບໍລິສັດສາມາດເຂົ້າມາສຳຫລວດ ແລະ ສອບຖາມຂໍ້ມູນໄດ້ ນັບຕັ້ງແຕ່ ມື້ນີ້ ເຖິງ 09/04/2025 ໃນວັນເວລາໂມງລັດຖະການ.

- **ໜ້າທີ່ຂອງຜູ້ໃຫ້ບໍລິການໃນການບຳລຸງຮັກສາ ຈັກປັ່ນໄຟຟ້າສຳຮອງ ແລະ ໝໍ້ແປງໄຟ ມີດັ່ງນີ້:**

**1) ຈັກປັ່ນໄຟຟ້າສຳຮອງ (Generator) :**

1. ໃຫ້ການບຳລຸງຮັກສາ.
2. ຊັບພອດແກ້ໄຂບັນຫາເຕັກນິກ
3. ລາຍງານສະພາບເຄື່ອງ **Generator** ຢ່າງເປັນປະຈຳພາຍຫລັງທີ່ເຮັດ MA ສຳເລັດ.
4. ກວດເຊັກໄຟຟ້າຂາເຂົ້າ-ຂາອອກ, ລະບົບສາຍດິນ ຂອງ Generator.
5. ບັນທຶກລາຍລະອຽດຕ່າງໆທີ່ຕິດພັນກັບຕົວເຄື່ອງ.
6. ກວດເຊັກພື້ນຖານຂອງເຄື່ອງ ເຊັ່ນ: ການຕັ້ງຄ່າຂອງເຄື່ອງ, ການອັບເດດ Firmware ແລະ ອື່ນໆ ຕາມມາດຕະຖານເຕັກນິກ.
7. ກວດ Log ຍ້ອນຫຼັງ.
8. ກວດອຸປະກອນອື່ນໆຂອງເຄື່ອງ Generator.
9. ທຳການ Self-Test ຕົວເຄື່ອງ, ກວດ Battery ແລະ ອື່ນໆ.
10. ປ່ຽນຖ່າຍກອງ ເຄື່ອງ, ກອງກາຊວນ, ກອງອາກາດ, ນ້ຳມັນເຄື່ອງ ແລະ ນ້ຳຢາຫຼໍ່ເຢັນ.
11. ບຳລຸງຮັກສາອະນາໄມພາຍໃນ ແລະ ພາຍນອກຕົວເຄື່ອງ.

12. ສະຫຼຸບລາຍງານໃຫ້ ທຄຕລ ໃນການບຳລຸງຮັກສາແຕ່ລະຄັ້ງ.
13. ການເຂົ້າມາບຳລຸງຮັກສາຢ່າງໜ້ອຍ 3 ເດືອນ/ຄັ້ງ (4 ຄັ້ງ/ປີ) ເຖິງວ່າຈະມີບັນຫາ ຫຼື ບໍ່ມີບັນຫາກໍ່ຕາມ.
14. ໜ້າວຽກອື່ນໆທີ່ຈຳເປັນໃນການບຳລຸງຮັກສາ Generator ໃຫ້ບໍລິສັດລະບຸມາ.
15. ທຳການທົດສອບມອດ-ສະລັບລະບົບໄຟທັງ 2 ແຫຼ່ງ ປີລະ 1 ຄັ້ງ ແລະ ເຮັດແຜນດຳເນີນການສະລັບລະອຽດ.
16. ຕ້ອງໃຫ້ຄຳແນະນຳແລະເຮັດລາຍການ ອາໄລ່ ສະເພາະທີ່ສຳຄັນທີ່ ຕ້ອງປ່ຽນຖ່າຍໃຫ້ ທາງ ທຄຕລ ຮັບຊາບ.
17. ຕ້ອງເປັນບໍລິສັດທີ່ມີປະສົບການ, ມີຜົນງານການຕິດຕັ້ງ ແລະ ບຳລຸງຮັກສາໃຫ້ບັນດາອົງກອນ ຫຼື ໂຄງການຢ່າງໜ້ອຍ 03 ປີຂຶ້ນໄປ.
18. ຕ້ອງມີພະນັກງານຊັບພອດແກ້ໄຂບັນຫາເຕັກນິກຂອງບໍລິສັດເອງ ຢ່າງໜ້ອຍ 1 ຄົນຂຶ້ນໄປ.
19. ການບຳລຸງຮັກສາໃນແຕ່ລະຄັ້ງ ຕ້ອງມີຊ່ຽວຊານສະເພາະດ້ານຈາກບໍລິສັດນຳເຂົ້າແບນ Cummins ເຂົ້າຮ່ວມນຳທຸກຄັ້ງ.
20. ສາມາດໃຫ້ການຊັບພອດແກ້ໄຂບັນຫາຜ່ານທາງ Online ແລະ On Site ບໍ່ເກີນ 1ຊົ່ວໂມງ (ບໍລິສັດກຳນົດມາ).
21. ຕ້ອງເປັນບໍລິສັດທີ່ສາມາດເປີດ Ticket ນຳບໍລິສັດຜູ້ຜະລິດ ຫຼື Global Support ໄດ້.
22. ຕ້ອງຕິດຄັດມາດຖານເຕັກນິກຂອງໜ້າວຽກທີ່ຕິດພັນກັບການບຳລຸງຮັກສາມາພ້ອມ.

**2) ໝໍ້ແປງໄຟຟ້າ (Transformer) ແລະ ຕູ້ຄວບຄຸມ (ATS):**

1. ໃຫ້ການບຳລຸງຮັກສາ.
2. ຊັບພອດແກ້ໄຂບັນຫາເຕັກນິກ.
3. ລາຍງານສະພາບເຄື່ອງອຸປະກອນທີ່ຕິດພັນເຊັ່ນ: (ຊຸດໝໍ້ແປງໄຟ ຈຳນວນ 2 Sources, ຕູ້ MCB, ຕູ້ C-BANK, ATS, ຕູ້ Control) ກວດເຊັກສາຍ Input-Output ແລະ ອື່ນໆທີ່ຕິດພັນ.
4. ກວດເຊັກໄຟເຂົ້າ ອອກໝໍ້ແປງ.
5. ກວດເຊັກຂໍ້ຕໍ່ແຕ່ລະໂຕ.
6. ກວດເຊັກກະແສໄຟ.
7. ກວດເຊັກຈຸດເຊື່ອມຕໍ່ແຕ່ລະຈຸດ.
8. ປ່ຽນຖ່າຍນ້ຳມັນໝໍ້ແປງ.
9. ທົດສອບລະບົບການທຳງານຂອງອຸປະກອນອື່ນໆທີ່ຕິດພັນ.
10. ຕ້ອງໃຫ້ຄຳແນະນຳ ແລະ ເຮັດລາຍການ ອາໄຫລ່ ສະເພາະທີ່ສຳຄັນທີ່ຕ້ອງປ່ຽນຖ່າຍໃຫ້ ທາງ ທຄຕລ ຮັບຊາບ.

- **ເງື່ອນໄຂຂອງບໍລິສັດທີ່ມີຄວາມຕ້ອງການເຂົ້າຮ່ວມຍື່ນຊອງປະມູນລາຄາຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:**
  - **<u>ເອກະສານ ຊອງທີ1:</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ ຫຼື ໄຟຟ້າ, ດຳເນີນທຸລະກິດ ຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນ 3 ປີ (ປີ 2021, 2022, 2023).

2. ໃບຢັ້ງຢືນການເປັນຕົວແທນຈຳໜ່າຍຈາກບໍລິສັດຜູ້ສະໜອງຍີ່ຫໍ້ Cummins ປະເທດລາວ ແລະ ຍັງບໍ່ໝົດອາຍຸຂອງສັນຍາ (ຖ້າມີ).
3. ເອກະສານລາຍລະອຽດສະເປັກໜ້າວຽກ, ການຮັບປະກັນ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.
4. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ ວັນພຸດ **ວັນທີ 09/04/2025 ເວລາ 15:00 ໂມງ** ໂດຍການສົ່ງຟາຍເຂົ້າ E-mail: procurement@bcel.com.la ແລະ inspect-it@bcel.com.la ເພື່ອໃຫ້ ທຄຕລ ໄດ້ກວດສະເປັກ.

❖ **ເອກະສານ ຊອງທີ2: (ປິດຊອງ)**

1. ໃບສະເໜີລາຄາຕ້ອງເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ 10%.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 30/06/2025)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນໃຫ້ຜູ້ບໍ່ໄດ້ຮັບການຄັດເລືອກພາຍໃນ 10 ວັນ.
3. ໃນວັນພະຫັດ **ວັນທີ 24/04/2025 ເວລາ 13:30 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ອາຄານ C.

**ໝາຍເຫດ:**

- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ, ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫລາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

**ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.

**ການຊຳລະແມ່ນແບ່ງອອກເປັນ 04 ງວດ/ປີ ດັ່ງລຸ່ມນີ້:**

- **ງວດທີ 1**: ຊຳລະ 25% ຂອງມູນຄ່າ ພາຍໃນ 30 ວັນ ພາຍຫຼັງທີ່ເຂົ້າມາບຳລຸງຮັກສາ ງວດທີ 1 ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.
- **ງວດທີ 2**: ຊຳລະ 25% ຂອງມູນຄ່າ ພາຍໃນ 30 ວັນ ພາຍຫຼັງທີ່ເຂົ້າມາບຳລຸງຮັກສາ ງວດທີ 2 ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.
- **ງວດທີ 3**: ຊຳລະ 25% ຂອງມູນຄ່າ ພາຍໃນ 30 ວັນ ພາຍຫຼັງທີ່ເຂົ້າມາບຳລຸງຮັກສາ ງວດທີ 3 ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.
- **ງວດທີ 4:** ຊຳລະ 25% ຂອງມູນຄ່າ ພາຍໃນ 30 ວັນ ພາຍຫຼັງທີ່ເຂົ້າມາບຳລຸງຮັກສາ ງວດທີ 4 ແລະ ກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນ. ສາຍສະໝອນ ຈັນທະຈັກ

ເບີໂທ: 213200 ຕໍ່ 414
020 23344556, 02055334674

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ………../ທຄຕລ, ລົງວັນທີ ………………….

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | ໝາຍເຫດ |
|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານ MA ກ່ຽວກັບຈັກປັ່ນໄຟ ຜ່ານມາ | ໜ້າວຽກ | |
| 1 | ບ/ສ……… | (ເລກທີ/ ລົງວັນທີ) | (ເລກທີ/ ລົງວັນທີ) | (ເລກທີ/ ລົງວັນທີ) | …. ປີ | (ໃຫ້ລະບຸ) | | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ …………………

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: